พระคำพีสำลับຫຼານນ້ອຍ

ສະເໜີ

# ຈຸດເລີ່ມຕົ້ນຂອງຄວາມໂສກເສົ້າແຫ່ງມະນຸດຊາດ



ຂຽນໂດຍ: Edward Hughes
ແຕ້ມຮູບໂດຍ: Byron Unger; Lazarus
ດັດແກ້ໂດຍ: M. Maillot; Tammy S.
ແປໂດຍ: Christian Lingua
ຈັດພິມໂດຍ: Bible for Children
www.M1914.org

BFC
PO Box 3
Winnipeg, MB R3C 2G1
Canada

©2020 Bible for Children, Inc.
ໃບອະນຸຍາດ: ທ່ານສາມາດອັດສຳເນົາ ຫຼືຕີພິມເລື່ອງນີ້ໄດ້
ແຕ່ຫ້າມເຮັດເພື່ອຈຳໜ່າຍເດັດຂາດ



ພຣະເຈົ້າໄດ້ຊົງສ້າງທຸກຢ່າງສຳເລັດ!
ເມື່ອພຣະເຈົ້າຊົງສ້າງມະນຸດຄົນທຳອິດ,
ຄືອາດາມ, ລາວໄດ້ອາໃສຢູ່ໃນສວນເອ
ເດນພ້ອມກັບເມຍຂອງລາວ, ຄືເອວາ.
ພວກເຂົາມີຄວາມ
ສຸກທີ່ສຸດກັບການເຊື່ອຟັງພຣະເຈົ້າ
ແລະຊົມຊື່ນຍິນດີໃນການສະຖິດຢູ່ຂອງພຣະອົງ,
ຈົນວັນໜຶ່ງ …



ງູໃຫຍ່ໄດ້ເອີ້ນຖາມເອວາ,
“ພຣະເຈົ້າໄດ້ຫ້າມເຈົ້າບໍ່ໃຫ້
ກິນໝາກໄມ້ບາງຕົ້ນຊັ້ນອະ?”
ເອວາກໍຕອບວ່າ, “ແມ່ນແລ້ວ,
ພວກເຮົາສາມາດກິນໝາກໄມ້ຕົ້ນໃດກໍໄດ້
ແຕ່ຍົກເວັ້ນຢູ່ຕົ້ນໜຶ່ງ. ຖ້າຫາກພວກເຮົາກິນ
ຫຼືແຕະຕ້ອງມັນ,
ພວກເຮົາຈະຕາຍ.”
ງູໃຫຍ່ນັ້ນກໍຕອບຄືນເອວາວ່າ,
“ເຈົ້າຈະບໍ່ຕາຍດອກ.”



“ແຕ່ເຈົ້າຈະເປັນເໝືອນກັບພຣະເຈົ້າ.”
ເອວາເລີຍເກີດຄວາມຕ້ອງການໝາກໄມ້ດັ່ງກ່າວທັນທີ.
ນາງຟັງງໃຫຍ່
ແລະໄດ້ກິນໝາກໄມ້ນັ້ນ.

ຫຼັງຈາກທີ່ເອວາບໍ່ເຊື່ອຟັງພຣະເຈົ້າ,
ນາງກໍໄດ້ຊັກນຳອາດາມໃຫ້ກິນໝາກໄມ້ນັ້ນຄືກັນ.
ຝ່າຍອາດາມຄວນຕອບປະຕິເສດເອວາວ່າ,
"ບໍ່! ເຮົາຈະບໍ່ຝ່າຝືນພຣະຄຳສັ່ງຂອງພຣະເຈົ້າເດັດຂາດ."





ເມື່ອອາດາມ ແລະເອວາໄດ້ເຮັດຜິດບາບ,
ພວກເຂົາທັງສອງກໍຮູ້ເມື່ອຄຶງທັນທີວ່າຕົນເອງກຳລັງເປືອຍກາຍຢູ່.
ຈຶ່ງພາກັນເອົາໃບໝາກເດື່ອມາຫຍິບຕໍ່ກັນເປັນເຄື່ອງນຸ່ງ
ປົກຫຸ້ມຮ່າງກາຍ ແລະຫລົບລີ້ຈາກພຣະເຈົ້າຢູ່ໃນພຸ່ມໄມ້.



ໃນຕອນແລງອາກາດເຢັນໆ
ພຣະເຈົ້າໄດ້ສະເດັດເຂົ້າມາໃນສວນເອເດັນ.
ພຣະອົງຊົງຮູ້ດີວ່າ ອາດາມ ແລະເອວາໄດ້ເຮັດຫຍັງ.
ອາດາມກ່າວໂທດໃສ່ເອວາ.
ຜ່າຍເອວາກໍກ່າວໂທດໃສ່ງູໃຫຍ່.
ພຣະເຈົ້າຊົງກ່າວວ່າ, “ເຮົາຈະສາບແຊ່ງງູໃຫຍ່; ສ່ວນຜູ້ຍິງນັ້ນ ເມື່ອເກີດລູກ ນາງຈະຕ້ອງໄດ້ຮັບຄວາມເຈັບປວດຫຼາຍ.”

“ອາດາມ, ເພາະເຈົ້າໄດ້ເຮັດຜິດ,
ແຜ່ນດິນຈະຕ້ອງຖືກສາບແຊ່ງ
ແຜ່ນດິນຈະເຕັມໄປດ້ວຍສ້ຽນ
ແລະໜາມ.

ເຈົ້າຈະເຮັດວຽກໜັກລົນເຫື່ອອອກ
ເພື່ອໃຫ້ໄດ້ອາຫານກິນໃນແຕ່ລະວັນ.”



ພຣະເຈົ້າຊົງຂັບໄລ່ອາດາມ
ແລະເອວາອອກຈາກສວນທີ່ວິເສດ.
ເພາະພວກເຂົາໄດ້ເຮັດຜິດບາບ,
ພວກເຂົາຖືກແຍກອອກຈາກພຣະ
ເຈົ້າຜູ້ຊົງໃຫ້ມີຊີວິດ!

ພຣະເຈົ້າຊົງຕັ້ງໃຫ້ມີດາບໄຟເຝົ້າຍາມຢູ່ເພື່ອບໍ່
ໃຫ້ພວກເຂົາເຂົ້າໄປໃນສວນໄດ້ອີກ.
ພຣະເຈົ້າໄດ້ເອົາໜັງສັດມາເຮັດເສື້ອໃຫ້
ອາດາມ ແລະເອວາ.
ພຣະເຈົ້າໄດ້ເອົາໜັງ
ໂຕສັດມາແຕ່ໃສ?

ໃນເວລານັ້ນ, ຄອບຄົວໜຶ່ງໄດ້ເກີດມາຈາກອາດາມ
ແລະເອວາ. ລູກຊາຍກົກຂອງພວກເຂົາຄື ກາອີນ, ແມ່ນຊາວສວນ.
ລູກຊາຍຄົນທີສອງຂອງພວກເຂົາຄື ອາເບນ, ແມ່ນຄົນລ້ຽງແກະ.



ມີວັນໜຶ່ງກາອິນໄດ້ນຳເອົາຜັກມາຖວາຍເປັນເຄື່ອງບູຊາແກ່ພຣະຜູ້ເປັນເຈົ້າ. ສ່ວນອາເບນກໍໄດ້ນຳເອົາໂຕແກະທີ່ດີທີ່ສຸດຂອງຕົນມາຖວາຍເປັນເຄື່ອງບູຊາແກ່ພຣະເຈົ້າ. ຝ່າຍພຣະເຈົ້າຊົງພໍພຣະໄທຕໍ່ເຄື່ອງຖວາຍຂອງອາເບນ.



ພຣະເຈົ້າບໍ່ຊົງພໍພຣະໄທຕໍ່ເຄື່ອງຖວາຍຂອງກາອິນ.
ກາອິນໃຈຮ້າຍຫຼາຍ. ແຕ່ພຣະເຈົ້າຊົງກ່າວວ່າ,
"ຖ້າເຈົ້າເຮັດຖືກຕ້ອງແລ້ວ,
ເຈົ້າຈະຖືກປະຕິເສດຊັ້ນບໍ?"



ຄວາມຢາກຮ້າຍຂອງກາອິນຍັງບໍ່ຈາງຫາຍໄປ.
ຫຼັງຈາກນັ້ນຕໍ່ມາ,
ກາອິນໄດ້ໂດດໃສ່ອາເບນທີ່ທົ່ງນາ
ແລະໄດ້ຂ້າລາວຕາຍ!



ພຣະເຈົ້າໄດ້ຊົງກ່າວກັບກາອິນວ່າ, “ນ້ອງຊາຍຂອງເຈົ້າ ຄືອາເບນ ນັ້ນ, ຢູ່ທີ່ໃດ?” ກາອິນຕອບຄືນວ່າ, “ຂ້ານ້ອຍບໍ່ຮູ້, ຂ້ານ້ອຍເປັນຜູ້ເຝົ້າຮັກສານ້ອງຊາຍຂອງຂ້ານ້ອຍຊັ້ນຫວາ?”



ພຣະເຈົ້າໄດ້ລົງໂທດກາອິນໂດຍການເອົາຄວາມສາມາດໃນການເຮັດສວນອອກຈາກລາວ ແລະເຮັດໃຫ້ລາວພະເນຈອນໄປເລື້ອຍ.

ກາອິນໄດ້ອອກຈາກທີ່ສະຖິດຂອງພຣະເຈົ້າ.
ລາວໄດ້ແຕ່ງງານກັບລູກສາວຄົນໜຶ່ງຂອງອາດາມ
ແລະເອວາ.
ແລ້ວພວກເຂົາກໍກາຍເປັນຄອບຄົວໜຶ່ງ.



ຕໍ່ມາອີກບໍ່ດົນ,
ລູກຫຼານຂອງກາອິນກໍເຕັມໄປທົ່ວເມືອງທີ່ລາວໄປຕັ້ງຖິ່ນຖານຢູ່.

ໃນຂະນະດຽວກັນ, ຄອບຄົວຂອງອາດາມ
ແລະເອວາກໍຂະຫຍາຍໃຫຍ່ຂຶ້ນໄວຫຼາຍ,
ຜູ້ຄົນໃນສະໄຫມນັ້ນມີອາຍຸຍືນຍາວກວ່າ
ພວກເຮົາໃນສະໄຫມນີ້ຫຼາຍ.



ເມື່ອລູກຊາຍຂອງເອວາຄື ເຊດ ເກີດອອກມາ, ນາງກໍກ່າວວ່າ,
“ພຣະເຈົ້າໄດ້ປະທານເຊດມາແທນອາເບນ.”
ເຊດແມ່ນຜູ້ທີ່ພຣະເຈົ້າຊົງພໍພຣະໄທຫຼາຍ
ແລະເພິ່ນມີອາຍຸຮອດ 912 ປີ ແລະມີລູກຫຼາຍຄົນ.



ມະນຸດເທິງໂລກນີ້ເລີ່ມຊົ່ວຊ້າຂຶ້ນເລື້ອຍໆ
ຈາກຄົນລຸ່ນໜຶ່ງສູ່ຄົນລຸ້ນອື່ນໆ. ໃນທີ່ສຸດ
ພຣະເຈົ້າກໍຕັດສິນໃຈວ່າ
ຈະທໍາລາຍມະນຸດຊາດຖິ້ມ
ແລະ ໂຕສັດ ແລະນົກທັງໝົດ.
ພຣະເຈົ້າຊົງເສຍໃຈທີ່ໄດ້ສ້າງມະນຸດຂຶ້ນມາ
ແຕ່ມີຄົນໜຶ່ງທີ່ພຣະເຈົ້າຊົງພໍພຣະໄທ.



ຊາຍຄົນນີ້ຄືໂນອາ. ເຊື້ອສາຍຄົນໜຶ່ງຂອງ
ເຊດ,
ໂນອາແມ່ນຄົນຊອບທຳ ແລະບໍ່ມີຕຳນິ.
ເພິ່ນຕິດຕາມພຣະເຈົ້າມາຕະຫຼອດ.



ນອກນັ້ນ
ເພິ່ນຍັງໄດ້ສອນລູກຊາຍທັງສາມຄົນໃຫ້ເຊື່ອຟັງພຣະເຈົ້າ
ດ້ວຍ.
ບັດນີ້ພຣະເຈົ້າໄດ້ວາງແຜນທີ່ຈະໃຊ້ໂນອາໃນແບບພິເສດ
ແລະບໍ່ຄືໃຜ.



จุดเລີ່ມຕົ້ນຂອງຄວາມໂສກເສົ້າແຫ່ງມະນຸດຊາດ

ເລື່ອງໜຶ່ງຈາກພຣະຄຳຂອງພຣະເຈົ້າ, ພຣະຄຳພີ,

ທີ່ສາມາດພົບໄດ້ໃນ

ປະຖົມມະການ ບົດທີ 3-6

"ຄຳສອນຂອງພຣະອົງໃຫ້ແສງສະຫວ່າງ."
ເພງສັນລະເສີນ 119:130

# ຈົບບໍລິບູນ

2

60

ເລື່ອງລາວໃນພຣະຄຳພີຕອນນີ້ບອກພວກເຮົາກ່ຽວກັບພຣະເຈົ້າຜູ້ວິເສດ
ຜູ້ທີ່ສ້າງພວກເຮົາ ແລະຢາກໃຫ້ພວກຫຼານຮູ້ຈັກກັບພຣະເຈົ້າດ້ວຍ.

ພຣະເຈົ້າຊົງຮູ້ວ່າ ພວກເຮົາໄດ້ເຮັດການຊົ່ວຫຼາຍຢ່າງ ຊຶ່ງພຣະອົງເອີ້ນວ່າ ຜິດບາບ.
ບົດລົງໂທດຂອງຄວາມບາບຄືຄວາມຕາຍ. ແຕ່ພຣະເຈົ້າຊົງຮັກຫຼານຫຼາຍ
ຈົນໄດ້ສົ່ງພຣະບຸດອົງດຽວຂອງພຣະອົງລົງມາ, ຄືພຣະເຢຊູ, ໃຫ້ມາຕາຍທີ່ໄມ້ກາງແຂນ
ແລະຮັບໂທດບາບແທນເຮົາ. ຫຼັງຈາກນັ້ນ ພຣະອົງກໍ່ເປັນຄືນມາຈາກຕາຍ
ແລະສະເດັດຄືນສູ່ເຮືອນຂອງພຣະອົງຄືຟ້າສະຫວັນ! ຖ້າຫຼານເຊື່ອໃນພຣະເຢຊູ
ແລະຂໍການອະໄພໂທດບາບຈາກພຣະອົງ, ພຣະອົງຈະຊົງຍົກໂທດໃຫ້ແນ່ນອນ!
ພຣະອົງຈະສະເດັດມາປະທັບໃນຊີວິດຂອງຫຼານທັນທີ,
ແລະຫຼານຈະໄດ້ຢູ່ນຳພຣະອົງຕະຫຼອດໄປເປັນນິດ.

ຖ້າຫຼານເຊື່ອວ່າອັນນີ້ແມ່ນຄວາມຈິງແທ້, ກໍໃຫ້ອະທິຖານກັບພຣະເຈົ້າຕາມນີ້:
ຂ້າແດ່ພຣະເຢຊູ, ຂ້ານ້ອຍເຊື່ອວ່າພຣະອົງຊົງເປັນພຣະເຈົ້າ
ແລະໄດ້ບັງເກີດມາເປັນມະນຸດຕາຍທີ່ໄມ້ກາງແຂນແທນຜິດບາບຂອງຂ້ານ້ອຍ
ແລະບັດນີ້ພຣະອົງໄດ້ຊົງເປັນຄືນມາອີກຄັ້ງ. ຂໍຊົງສະເດັດມາປະທັບໃນຊີວິດຂອງຂ້ານ້ອຍ
ແລະຍົກໂທດຜິດບາບຂອງຂ້ານ້ອຍ, ຂໍຊົງປະທານຊີວິດໃໝ່ໃຫ້ແກ່ຂ້ານ້ອຍດ້ວຍໃນເວລານີ້
ເພື່ອວັນໜຶ່ງຂ້ານ້ອຍຈະໄດ້ຢູ່ນຳພຣະອົງຕະຫຼອດໄປເປັນນິດ.
ຂໍຊົງຊ່ວຍຂ້ານ້ອຍໃຫ້ເຊື່ອຟັງພຣະອົງ ແລະມີຊີວິດຢູ່ເພື່ອພຣະອົງ ເປັນລູກ. ອາແມນ.

ຈົ່ງອ່ານພຣະຄຳພີ ແລະສົນທະນານຳພຣະເຈົ້າທຸກວັນ!   ໂຢຮັນ 3:16